ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ [illegible] /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ

# ລະບຽບ

# ວ່າດ້ວຍທະນາຄານດູແລຊັບສິນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 501/ສຄຄຊ, ລົງວັນທີ 24 ເມສາ 2014.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຂອງທະນາຄານດູແລຊັບສິນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແນໃສ່ອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ແລະ ສົ່ງເສີມການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ຂະຫຍາຍຕົວຢ່າງມີ ປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ທະນາຄານດູແລຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດເປັນທະນາຄານດູແລຊັບສິນ

**ມາດຕາ 3 ການຂໍອະນຸຍາດເປັນທະນາຄານດູແລຊັບສິນ**

ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນ ຕ້ອງຂໍການຮັບຮອງການເຄື່ອນໄຫວຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບທະນາຄານທຸລະກິດຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນ ຢູ່ ສປປ ລາວ ສາມາດໃຫ້ບໍລິການດ້ວຍການຮ່ວມມືກັບທະນາຄານທຸລະກິດໃດໜຶ່ງທີ່ຕັ້ງຢູ່ ສປປ ລາວ ຫຼື ດ້ວຍການນໍາໃຊ້ລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານ ເຊື່ອມໂຍງກັບພາກສ່ວນກ່ຽວຂ້ອງພາຍໃນ ສປປ ລາວ ຕາມການຮັບຮອງການເຄື່ອນໄຫວຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 4 ເງື່ອນໄຂການຂໍອະນຸຍາດເປັນທະນາຄານດູແລຊັບສິນ**

ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນ ຕ້ອງປະຕິບັດ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 79 ຍົກເວັ້ນ ຂໍ້ 3 ນອກຈາກນັ້ນ ຍັງຕ້ອງປະຕິບັດຕາມເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານ ເຊື່ອມໂຍງກັບພາກສ່ວນກ່ຽວຂ້ອງ ແລະ ສາມາດຮັບປະກັນຄວາມປອດໄພສູງ;
2. ມີສັນຍາຮ່ວມກັບ ຕະຫຼາດຫຼັກຊັບລາວ (ສູນຮັບຝາກຫຼັກຊັບ) ແລະ ບໍລິສັດຫຼັກຊັບ;
3. ບໍ່ເຄີຍ ລະເມີດລະບຽບກົດໝາຍ ແລະ ຂໍ້ຫ້າມຕ່າງໆ ທີ່ມີລັກສະນະຮ້າຍແຮງ ໃນຂົງເຂດການເງິນ-ການທະນາຄານ;
4. ພະນັກງານ ຕ້ອງມີຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນຂະແໜງການເງິນ-ການທະນາຄານ, ການບັນຊີ ຫຼື ຂົງເຂດທີ່ກ່ຽວຂ້ອງ ແລະ ມີປະສົບການໃນຂະແໜງການດັ່ງກ່າວ ສາມປີ (3 ປີ) ຂຶ້ນໄປ, ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານການສໍ້ໂກງຊັບ, ການຍັກຍອກຊັບ, ການປອມແປງເອກະສານ, ການຮັບ ຫຼື ໃຫ້ສິນບົນ, ການສໍ້ລາດບັງຫຼວງ ຫຼື ການຟອກເງິນ ແລະ ບໍ່ເຄີຍກະທໍາຜິດໃນຂະແໜງທຸລະກິດດ້ານຫຼັກຊັບ.

ສໍາລັບທະນາຄານທຸລະກິດຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນຢູ່ ສປປ ລາວ ນອກຈາກມີເງື່ອນໄຂຕາມທີ່ໄດ້ກໍານົດມາຂ້າງເທິງນັ້ນ ຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີສັນຍາຮ່ວມກັບ ທະນາຄານທຸລະກິດໃດໜຶ່ງ ທີ່ຕັ້ງຢູ່ ສປປ ລາວ ເພື່ອເຮັດໜ້າທີ່ເປັນທະນາຄານຕົວແທນໃນການຊໍາລະເງິນ ຫຼື ຫຼັກຊັບ;
2. ຕ້ອງມາຈາກປະເທດທີ່ ອົງການຄຸ້ມຄອງຫຼັກຊັບ ຂອງ ສປປ ລາວ ມີສາຍພົວພັນຮ່ວມມື ໂດຍການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັນ.

ມາດຕາ 5 ເອກະສານປະກອບການຂໍອະນຸຍາດເປັນທະນາຄານດູແລຊັບສິນ

ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນ ຢູ່ ສປປ ລາວ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 80 ແລະ ນອກຈາກນັ້ນ ຍັງຕ້ອງມີເອກະສານເພີ່ມເຕີມ ດັ່ງນີ້:

1. ບົດສະເໜີກ່ຽວກັບການເຄື່ອນໄຫວເປັນທະນາຄານດູແລຊັບສິນ;
2. ໂຄງປະກອບການຈັດຕັ້ງ ຂອງພະແນກດູແລຊັບສິນ ພ້ອມທັງກຳນົດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງພະແນກດັ່ງກ່າວ;
3. ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂະແໜງການທີ່ກ່ຽວຂ້ອງພາຍໃນພະແນກດູແລຊັບສິນ;
4. ລະບຽບການ ແລະ ຄູ່ມື ທີ່ກຽວຂ້ອງ ຂອງພະແນກດູແລຊັບສິນ;
5. ຊີວະປະຫວັດຫຍໍ້, ໃບຢັ້ງຢືນວຸດທິການສຶກສາ, ປະສົບການ, ການຝຶກອົບຮົມ ແລະ ໃບແຈ້ງໂທດ ບໍ່ໃຫ້ກາຍ ສາມເດືອນ ຂອງຜູ້ບໍລິຫານ ແລະ ພະນັກງານທີ່ກ່ຽວຂ້ອງ ຂອງພະແນກດູແລຊັບສິນ;
6. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານປະກອບການຂໍອະນຸຍາດເປັນທະນາຄານດູແລຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງລະບຽບສະບັບນີ້ ຕ້ອງຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຄົ້ນຄວ້າພິຈາລະນາ ແລະ ອອກໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ດັ່ງກ່າວ.

ມາດຕາ 6 ການພິຈາລະນາການຂໍອະນຸຍາດເປັນທະນາຄານດູແລຊັບສິນ

ເມື່ອໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຂໍອະນຸຍາດເປັນທະນາຄານດູແລຊັບສິນ ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງລະບຽບສະບັບນີ້ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຄົ້ນຄວ້າພິຈາລະນາ ແລະ ອອກໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບເປັນຕົ້ນໄປ. ໃນກໍລະນີປະຕິເສດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍຊາບ.

ມາດຕາ 7 ການປະກາດໃຫ້ມວນຊົນຊາບ

ພາຍຫຼັງໄດ້ຮັບໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທະນາຄານດູແລຊັບສິນ ຕ້ອງປະກາດໃຫ້ມວນຊົນຊາບ ໂດຍຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍຫ້າວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ເປັນຕົ້ນໄປ.

## ໝວດທີ 3
## ການເຄື່ອນໄຫວຂອງທະນາຄານດູແລຊັບສິນ

**ມາດຕາ 8 ການເຄື່ອນໄຫວຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ສາມາດເຄື່ອນໄຫວທຸລະກິດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 82 ຍົກເວັ້ນ ຂໍ້ 7.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ນອກຈາກມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 83 ແລ້ວ ຍັງມີ ສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ແຍກຊັບສິນຂອງຕົນ ອອກຈາກຊັບສິນຂອງລູກຄ້າ ພ້ອມທັງແຍກຊັບສິນຂອງລູກຄ້າ ອອກເປັນແຕ່ລະລາຍ;
2. ບັນທຶກ ແລະ ສົມທຽບຈຳນວນຫຼັກຊັບຂອງລູກຄ້າ ທີ່ມີໃນບັນຊີຫຼັກຊັບ ຢູ່ສູນຮັບຝາກຫຼັກຊັບກັບຈຳນວນຫຼັກຊັບຂອງລູກຄ້າ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
3. ກວດນັບ ຫຼື ກວດກາຊັບສິນ (ເງິນ ແລະ ຫຼັກຊັບ) ຂອງລູກຄ້າ ຢ່າງເປັນປົກກະຕິ;
4. ເກັບຮັກສາຂໍ້ມູນ, ຊັບສິນ ແລະ ຮັບ-ສົ່ງ ຂໍ້ມູນ ຂອງລູກຄ້າໃຫ້ປອດໄພ ພ້ອມທັງຮັບປະກັນການສົ່ງມອບຫຼັກ ຊັບທີ່ເປັນໃບ (Physical certificate);
5. ຮັກສາຄວາມປອດໄພ ໃນການເກັບຮັກສາບັນດາເອກະສານທັງໝົດທີ່ຕິດພັນກັບທຸລະກຳຂອງລູກຄ້າ;
6. ຊຳລະເງິນ ຫຼື ຫຼັກຊັບ ຕາມຄຳສັ່ງຂອງລູກຄ້າ;
7. ໂອນບັນຊີຫຼັກຊັບ ແລະ ບັນຊີເງິນຂອງລູກຄ້າ ຈາກທະນາຄານດູແລຊັບສິນຂອງຕົນ ໄປຍັງທະນາຄານດູແລຊັບສິນອື່ນ ຕາມການສະເໜີຂອງລູກຄ້າ;
8. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການໂອນຫຼັກຊັບ ຈາກບຸກຄົນໜຶ່ງ ໃຫ້ບຸກຄົນອື່ນຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງໄດ້ກຳນົດໄວ້;
9. ກໍ່ສ້າງບຸກຄະລາກອນຂອງຕົນ ໃຫ້ມີຄວາມຊຳນິຊຳນານກ່ຽວກັບວຽກງານໃຫ້ການບໍລິການດູແລຊັບສິນ;
10. ເປັນຜູ້ຕາງໜ້າໃຫ້ແກ່ລູກຄ້າ ເຂົ້າຮ່ວມ ແລະ ລົງຄະແນນສຽງ ໃນກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງລູກຄ້າ;
11. ແຈ້ງ ແລະ ສະໜອງ ຂໍ້ມູນທີ່ກ່ຽວຂ້ອງ ໃຫ້ແກ່ລູກຄ້າຊາບ ຊຶ່ງເປັນຂໍ້ມູນທີ່ມີຜົນປະໂຫຍດ ຕໍ່ລູກຄ້າ ເປັນຕົ້ນ:
    1) ລະບົບການຊື້-ຂາຍຂັດຂ້ອງ, ມີຄວາມບໍ່ສະຫງົບທາງດ້ານການເມືອງ ແລະ ເກີດມີໄພພິບັດຈາກທຳມະຊາດ ຫຼື ກໍລະນີ ເກີດມີເຫດການສຸດວິໄສ ໃດໜຶ່ງເກີດຂຶ້ນ;
    2) ການປ່ຽນແປງທາງດ້ານນະໂຍບາຍ ຫຼື ລະບຽບກົດໝາຍ ທີ່ສົ່ງຜົນກະທົບຕໍ່ວຽກງານຫຼັກຊັບ;

3) ການປ່ຽນແປງ ຫຼື ປັບປຸງ ລະບົບສະສາງ-ຊໍາລະ;

4) ການຢຸດ ຫຼື ໂຈະ ການໃຫ້ບໍລິການ ໃນທຸກກໍລະນີ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງທະນາຄານດູແລຊັບສິນ.

12. ເຮັດສັນຍາການຮັກສາຊັບສິນກັບລູກຄ້າຂອງຕົນ;

13. ແຈ້ງໃຫ້ລູກຄ້າຊາບທັນທີກ່ຽວກັບ ຜົນການສະສາງ-ຊໍາລະທຸລະກໍາຫຼັກຊັບ ພາຍຫຼັງສິ້ນສຸດການຊື້-ຂາຍຫຼັກຊັບ;

14. ສະໜອງຂໍ້ມູນໃຫ້ແກ່ລູກຄ້າຊາບ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ເປັນຕົ້ນແມ່ນ ຂໍ້ມູນກ່ຽວກັບ ທຸລະກໍາຊື້-ຂາຍຫຼັກຊັບ, ການເຄື່ອນໄຫວບັນຊີເງິນ, ຍອດເຫຼືອຫຼັກຊັບ ແລະ ຍອດເງິນທີ່ມີຢູ່ໃນບັນຊີ;

15. ຮັກສາຄວາມລັບກ່ຽວກັບຂໍ້ມູນຂອງລູກຄ້າ;

16. ປະຕິບັດວຽກງານຢ່າງມີຈັນຍາບັນ, ດ້ວຍຄວາມຊື່ສັດ, ຍຸຕິທໍາ, ຄວາມສະເໝີພາບ ແລະ ປົກປ້ອງຜົນປະໂຫຍດຂອງລູກຄ້າ;

17. ສະໜອງຂໍ້ມູນກ່ຽວກັບຊັບສິນຂອງລູກຄ້າ ແລະ ຂໍ້ມູນອື່ນ ຕາມການຮ້ອງຂໍຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

18. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ລະບຸໄວ້ໃນສັນຍາກັບລູກຄ້າ.

### ມາດຕາ 10 ຂໍ້ຫ້າມ

ຫ້າມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີພຶດຕິກໍາໃດໜຶ່ງ ຕາມກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 135 ແລະ 139. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ເຄື່ອນໄຫວເປັນທະນາຄານດູແລຊັບສິນ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ໂອນ ຫຼື ມອບ ໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ໃຫ້ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດອື່ນ ເຄື່ອນໄຫວແທນຕົນ;
3. ໂອນ, ນໍາໃຊ້ ຫຼື ບໍລິຫານຊັບສິນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ;
4. ບໍ່ປະຕິບັດໜ້າທີ່ຕາມສັນຍາທີ່ໄດ້ຕົກລົງກັນກັບລູກຄ້າ.

## ໝວດທີ 4
## ພັນທະ ແລະ ຄ່າທໍານຽມ

### ມາດຕາ 11 ພັນທະ

ທະນາຄານດູແລຊັບສິນ ຕ້ອງໃຫ້ການຮ່ວມມືກັບ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນການປະຕິບັດລະບຽບ ການລາຍງານ, ການກວດກາ, ການເປີດເຜີຍຂໍ້ມູນ ແລະ ການເກັບຮັກສາຂໍ້ມູນ ຕາມລະບຽບການຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ມາດຕາ 12 ຄ່າທຳນຽມ

ທະນາຄານດູແລຊັບສິນ ຕ້ອງຊຳລະຄ່າທຳນຽມ ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລາຍລະອຽດ ມີດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງ ຈຳນວນ ຫ້າລ້ານກີບ;
2. ໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ຈຳນວນ ຊາວລ້ານກີບ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສາມສິບລ້ານກີບ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 13 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

ມາດຕາ 14 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ ແລະ ປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 165, 166, 167 ແລະ ມາດຕາ 168 ຂໍ້ 7 ຍົກເວັ້ນ ຂໍ້ 7.1, 7.2, 7.3 ແລະ 7.5.

ນອກຈາກມາດຕະການປັບໃໝ ທີ່ໄດ້ລະບຸໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 168 ຂໍ້ 7. ນອກຈາກນັ້ນ ທະນາຄານດູແລຊັບສິນ ຍັງຈະຖືກປັບໃໝເພີ່ມເຕີມ ດັ່ງນີ້:

1. ເຄື່ອນໄຫວເປັນທະນາຄານດູແລຊັບສິນ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ ໜຶ່ງພັນຫ້າຮ້ອຍລ້ານ ຫາ ສອງພັນລ້ານກີບ ພ້ອມທັງຖືກສັ່ງໃຫ້ຢຸດເຊົາການບໍລິການດັ່ງກ່າວ;
2. ໂອນ ຫຼື ມອບ ໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ໃຫ້ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດອື່ນ ເຄື່ອນໄຫວແທນຕົນ ຈະຖືກປັບໃໝ ແຕ່ ໜຶ່ງພັນລ້ານ ຫາ ໜຶ່ງພັນຫ້າຮ້ອຍລ້ານກີບ;
3. ໂອນ, ນຳໃຊ້ ຫຼື ບໍລິຫານ ຊັບສິນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ ຜູ້ບໍລິຫານ ແລະ ບຸກຄົນທີ່ກ່ຽວຂ້ອງ ແຕ່ລະລາຍ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ ຂອງມູນຄ່າ ໂອນ, ນຳໃຊ້ ຫຼື ບໍລິຫານ.

# ໝວດທີ 6
# ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ທະນາຄານດູແລຊັບສິນ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ, ຂໍ້ກໍານົດ ແລະ ບົດບັນຍັດໃດທີ່ຂັດກັບລະບຽບສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ**